ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----======<<>>======-----

ກະຊວງການເງິນ

ເລກທີ 0462 /ກງ

ວຽງຈັນ,ວັນທີ 14 MAR 2003

# ຂໍ້ຕົກລົງຂອງລັດຖະມົນຕີ

## ວ່າດ້ວຍການເກັບຄ່າທຳນຽມເດັດຖານ ສຳລັບບາງປະເພດສິນຄ້າ ເຄື່ອງຂອງ ນຳເຂົ້າເພື່ອສົ່ງອອກຕໍ່.

---------------------------

- ອີງຕາມ ກົດໝາຍພາສີ ສະບັບເລກທີ 04/94 ລົງວັນທີ 18/7/1994 .
- ອີງຕາມ ຂໍ້ກຳນົດຂອງ ທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 127/ນຍ, ລົງວັນທີ 03/10/2000 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ.
- ອີງຕາມ ດຳລັດຂອງ ນາຍົກລັດຖະມົນຕີ ສະບັບເລກທີ 192/ນຍ, ລົງວັນທີ 02/11/1999 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍງົບປະມານແຫ່ງລັດ ເພື່ອຜັນຂະຫຍາຍດຳລັດ ເລກທີ 200/ນຍ, ລົງວັນທີ 12/10/2002 ວ່າດ້ວຍການປະກາດໃຊ້ ແລະຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານແຫ່ງລັດສົກປີ 2002 - 2003 ຮັບປະກັນການຈັດເກັບລາຍຮັບເຂົ້າງົບປະມານໃຫ້ໄດ້ຕາມແຜນການທີ່ສະພາຮັບຮອງເອົາ.

ເພື່ອສ້າງລາຍຮັບເພີ່ມເຕີມເຂົ້າງົບປະມານ, ນອກຈາກລາຍຮັບປົກກະຕິຈາກພາສີຂາເຂົ້າ-ຂາອອກ.

## ລັດຖະມົນຕີ ຕົກລົງ :

ມາດຕາ 01: ໃຫ້ກົມພາສີ ແລະດ່ານພາສີແຕ່ລະດ່ານ ທີ່ໄດ້ຮັບອະນຸຍາດ, ເກັບຄ່າທຳນຽມເດັດຖານ ສຳລັບບາງປະເພດສິນຄ້າເຄື່ອງຂອງ ທີ່ນຳເຂົ້າເພື່ອສົ່ງອອກຕໍ່, ດັ່ງລາຍລະອຽດລຸ່ມນີ້ :

ກ. <u>ປະເພດ ຢາສູບ</u>:

- ຢາສູບ ແຢັດ (Jet) ຂະໜາດບັນຈຸ 1ຫີບ/50ຕຸດ, 1ຕຸດ/10ຊອງ ໃຫ້ເກັບຄ່າທຳນຽມ 17$/1ຫີບ

- ຢາສູບ 555, ຢາສູບມາກໂບໂຣ, ຢາສູບບັນຊິນ, ຢາສູບເບັນເຊີນ, ຢາສູບມາຍເຊເວັນ ຂະໜາດບັນຈຸ 1ຫີບ/50ຕຸດ, 1ຕຸດ/10ຊອງ ແລະຢາສູບອື່ນໆ ທີ່ມີຄຸນນະພາບໃກ້ຄຽງກັນ ໃຫ້ເກັບຄ່າທຳນຽມ 17$/1ຫີບ.

ຂ. <u>ປະເພດ ເຫຼົ້າ</u>:

- ວິສະກີ້ ຈອນນີແດງ ໃຫ້ເກັບ 0,66$/1ລິດ.
- ວິສະກີ້ ຈອນນີດຳ ໃຫ້ເກັບ 1$/1ລິດ.
- ເຫຼົ້າ ແວງມາຈາກຕາເວັນຕົກ ໃຫ້ເກັບ 0,66$/1ລິດ.
- ເຫຼົ້າ ແວງທີ່ຜະລິດຢູ່ ສສ ຫວຽດນາມ ແລະ ສປ ຈີນ ໃຫ້ເກັບ 0,44$/1ລິດ.
- ເຫຼົ້າຍີ່ຫໍ້ອື່ນໆ ທີ່ມີລາຄາເທົ່າທຽມ ຫລື ຄຸນນະພາບໃກ້ຄຽງກັນກັບເຫຼົ້າຊະນິດໃດໜຶ່ງຂ້າງເທິງນັ້ນ ໃຫ້ເກັບຕາມອັດຕາຂອງເຫຼົ້າ ທີ່ມີລາຄາ ຫລື ຄຸນນະພາບໃກ້ຄຽງກັນ.

ຄ. <u>ປະເພດ ນ້ຳມັນເຊື້ອໄຟ</u>:

- ນ້ຳມັນເຊື້ອໄຟ ແລະ ນ້ຳມັນລໍ່ລື່ນທຸກຊະນິດ ໃຫ້ເກັບ 0,025$/1ລິດ .

ງ. <u>ປະເພດ ລົດ</u>:

- ປະເພດ ລົດ 4 ລໍ້ ຂຶ້ນໄປ ເປັນຄັນ ໃຫ້ເກັບ 300$/1ຄັນ.
- ປະເພດ ລົດ 4 ລໍ້ ຂຶ້ນໄປ ເປັນສິ້ນສ່ວນ ໃຫ້ເກັບ 200$/1ຄັນ
- ປະເພດ ລົດຈັກເປັນຄັນ ໃຫ້ເກັບ 12$/1ຄັນ.
- ປະເພດ ລົດຈັກເປັນສິ້ນສ່ວນ ໃຫ້ເກັບ 1,5% ຂອງມູນຄ່ານຳເຂົ້າຮອດຊາຍແດນລາວຕໍ່ 1ຊຸດຄັນ.

ຈ. ປະເພດ ງົວ, ຄວາຍ ໃຫ້ເກັບ 6$/1ໂຕ.

ສ. ປະເພດ ໝູ 1 ກິໂລ ຫາ 5 ກິໂລ ໃຫ້ເກັບ 2$/1ໂຕ.

ຊ. ປະເພດ ໝູ 5 ກິໂລ ຂຶ້ນໄປ ໃຫ້ເກັບ 4$/1ໂຕ.

<u>ມາດຕາ 02</u>: <u>ປະເພດ ສິນຄ້າທົ່ວໄປ</u>.

ກ. ປະເພດສິນຄ້າ ທີ່ມີອັດຕາພາສີປົກກະຕິ ແຕ່ 5% ຫາ 10% ໃຫ້ເກັບຄ່າທຳນຽມ 2% ຂອງມູນຄ່າແຈ້ງພາສີຮອດຊາຍແດນລາວ ບ່ອນນຳເຂົ້າສິນຄ້າເຄື່ອງຂອງ.

ຂ. ປະເພດສິນຄ້າ ທີ່ມີອັດຕາພາສີປົກກະຕິ ສູງກ່ວາ 10% ຫາ 20% ໃຫ້ເກັບ 4% ຂອງມູນຄ່າແຈ້ງພາສີຮອດຊາຍແດນລາວ ບ່ອນນຳເຂົ້າສິນຄ້າເຄື່ອງຂອງ.

ຄ. ປະເພດສິນຄ້າເຄື່ອງຂອງ ທີ່ມີອັດຕາພາສີປົກກະຕິ ສູງກວ່າ 20% ຫາ 40% ໃຫ້ເກັບຄ່າທຳນຽມ 6% ຂອງມູນຄ່າແຈ້ງພາສີຮອດຊາຍແດນລາວ ບ່ອນນຳເຂົ້າສິນຄ້າເຄື່ອງຂອງ.

ມາດຕາ 03: ສິນຄ້ານຳເຂົ້າເພື່ອສົ່ງອອກຕໍ່ ຈະບໍ່ເກັບອາກອນຕົວເລກທຸລະກິດ ແລະ ອາກອນຊົມໃຊ້ ແຕ່ຕ້ອງໄດ້ເສຍອາກອນກຳໄລ ຕາມລະບຽບກົດໝາຍ ຂອງສ່ວຍສາອາກອນ. ການນຳເຂົ້າແຕ່ລະຄັ້ງ ຕ້ອງໄດ້ເຮັດສັນຍາກັບກົມພາສີ ຫລືຫ້ອງພາສີປະຈຳກຳແພງນະຄອນ ຫລືແຂວງ ທີ່ໄດ້ຮັບອະນຸຍາດ ບົນພື້ນຖານອັດຕາເກັບເປັນເອກະພາບໃນທົ່ວປະເທດ ແລະ ຕ້ອງໄດ້ວາງເງິນມັດຈຳຕາມມູນຄ່າຢູ່ໃນສັນຍາ.

ມາດຕາ 04: ຫ້າມເດັດຂາດ ບໍ່ໃຫ້ນຳເອົາສິນຄ້ານຳເຂົ້າເພື່ອສົ່ງອອກໄປປະເທດທີສາມ ມາຂາຍຢູ່ພາຍໃນປະເທດ. ໃນກໍລະນີ ມີການຫລົບຫລີກ, ເຊື່ອງອຳ ຫລືບໍ່ປະຕິບັດຕາມຂໍ້ຜູກພັນສັນຍາ ຂອງການນຳເຂົ້າສິນຄ້າເພື່ອສົ່ງອອກໄປປະເທດທີສາມ ຈະໄດ້ມີການດຳເນີນຄະດີຕາມລະບຽບກົດໝາຍພາສີຢ່າງເຂັ້ມງວດ ຫລືຮ້າຍແຮງໄປກວ່ານັ້ນ ຈະໄດ້ຍົກເລີກຂໍ້ຜູກພັນສັນຍາໃນທັນທີ. ສ່ວນເງິນມັດຈຳຈະບໍ່ໄດ້ສົ່ງຄືນ.

ມາດຕາ 05: ຄ່າທຳນຽມສິນຄ້ານຳເຂົ້າເພື່ອສົ່ງອອກຕໍ່ ຈະເກັບຢູ່ກົມພາສີ ຫລື ຢູ່ດ່ານພາສີບ່ອນນຳເຂົ້າສິນຄ້າເຄື່ອງຂອງກໍ່ໄດ້, ໂດຍອີງຕາມສັນຍາທີ່ໄດ້ເຊັນກັບກົມພາສີ ຫລືຫ້ອງພາສີ, ຄ່າທຳນຽມຕ້ອງຈ່າຍເປັນເງິນໂດລາຕ່າງປະເທດ (ສະກຸນເງິນໂດລາສະຫະລັດ) ແລະ ມອບເຂົ້າເປັນລາຍຮັບ ຂອງງົບປະມານສູນກາງ ຕາມດຳລັດ ເລກທີ 192/ນຍ ລົງວັນທີ 02/11/1999.

ມາດຕາ 06: ສິນຄ້າດັ່ງທີ່ໄດ້ກຳນົດໃນຂໍ້ຕົກລົງສະບັບນີ້, ຫ້າມບໍ່ໃຫ້ນຳເຂົ້າຮ້ານຄ້າປອດພາສີ ແລະສາງອື່ນໆ ນອກຈາກສາງເກັບສິນຄ້າ ແນໃສ່ຜ່ານໄປປະເທດທີ 3 ເທົ່ານັ້ນ.

ມາດຕາ 07: ມອບໃຫ້ຫ້ອງການກະຊວງການເງິນ ແລະ ກົມພາສີ ນຳເອົາຂໍ້ຕົກລົງສະບັບນີ້ໄປເຜີຍແຜ່ໃຫ້ມີຄວາມເປັນເອກກະພາບໃນຂອບເຂດທົ່ວປະເທດ ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ນຳເອົາຂໍ້ຕົກລົງສະບັບນີ້ ໄປຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ມາດຕາ 08: ຂໍ້ຕົກລົງສະບັບນີ້ ໃຫ້ເລີ່ມປະຕິບັດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ ວ່າການກະຊວງການເງິນ

ຈັນສີ